

# ການປ່ຽນແປງນະໂຍບາຍການຈົດຊື່ເຂົ້າຮຽນ

## ຂໍ້ມູນສໍາລັບຄອບຄົວ

## ເປັນຫຍັງຈຶ່ງເລືອກການສຶກສາຂອງຣັດ?

ລະບົບການສຶກສາຂອງຣັດ NSW ຊ່ວຍໃຫ້ນັກຮຽນທຸກຄົນໄດ້ຮັບການສຶກສາລະດັບໂລກ, ໂດຍກະກຽມເດັກນ້ອຍໃນມື້ນີ້ໃຫ້ປະສົບຄວາມສໍາເລັດ ແລະ ສ້າງຊຸມຊົນທີ່ດີຂຶ້ນສໍາລັບອະນາຄົດ. ດ້ວຍການສະເໜີການສຶກສາທີ່ມີຄຸນນະພາບສູງ, ເຕັມຮູບແບບ ແລະ ໂອກາດໃນຫຼັກສູດຮ່ວມທີ່ບໍ່ມີໃຜທຽບໄດ້ໃນດ້ານວິທະຍາສາດ, ເຕັກໂນໂລຍີ, ວິສະວະກໍາ, ຄະນິດສາດ, ສິລະປະ, ກິລາ ແລະ ອື່ນໆ, ໂຮງຮຽນຣັດຖະບານທີ່ມີຄວາມຫຼາກຫຼາຍ ແລະ ແບບລວມກັນຂອງພວກເຮົາສະໜັບສະໜູນນັກຮຽນທຸກຄົນໃຫ້ເຂົ້າເຖິງຄວາມສາມາດເຕັມທີ່ຂອງພວກເຂົາ.

## ນະໂຍບາຍການຈົດຊື່ເຂົ້າຮຽນແມ່ນຫຍັງ?

ນະໂຍບາຍການຈົດຊື່ເຂົ້າຮຽນຊ່ວຍໃຫ້ໂຮງຮຽນເຮັດຕາມພາລະກິດຂອງພວກເຂົາພາຍໃຕ້ກົດ ໝາຍວ່າດ້ວຍການສຶກສາປີ 1990 (Education Act 1990), ເພື່ອໃຫ້ແນ່ໃຈວ່ານັກຮຽນທຸກຄົນສາມາດເຂົ້າເຖິງໂຮງຮຽນຣັດຖະບານໃນທ້ອງຖິ່ນຂອງພວກເຂົາໄດ້. ນະໂຍບາຍດັ່ງກ່າວຍັງໃຫ້ຂໍ້ມູນທີ່ຊັດແຈ້ງແກ່ພະນັກງານ ແລະ ຊຸມຊົນກ່ຽວກັບວິທີຈັດການການຈົດຊື່ເຂົ້າຮຽນໃນໂຮງຮຽນຂອງ ຣັດ NSW.

## ເປັນຫຍັງນະໂຍບາຍຈຶ່ງມີການປ່ຽນແປງ?

ກະຊວງສຶກສາຂອງຣັດ NSW ໄດ້ປຶກສາຫາລືກັບຄູ່ຮ່ວມດ້ານການສຶກສາ, ກຸ່ມຊຸມຊົນ ແລະ ທີມງານຜູ້ນໍາໂຮງຮຽນກ່ຽວກັບນະໂຍບາຍການຈົດຊື່ເຂົ້າຮຽນໃນປະຈຸບັນ. ພວກເຮົາໄດ້ຮັບຄໍາຄິດຄໍາເຫັນທີ່ສໍາຄັນກ່ຽວກັບຄວາມສໍາຄັນຂອງການແກ້ໄຂອຸປະສັກທີ່ຄອບຄົວຕ້ອງປະເຊີນໃນເວລາທີ່ພະຍາຍາມຈົດຊື່ເຂົ້າຮຽນໃນໂຮງຮຽນຫຼວງຂອງ ຣັດ NSW. ນະໂຍບາຍການຈົດຊື່ເຂົ້າຮຽນທີ່ໄດ້ຮັບການປັບປຸງແກ້ໄຂອຸປະສັກເຫຼົ່ານີ້ ແລະ ສອດຄ່ອງກັບຄວາມມຸ່ງໝັ້ນຂອງກະຊວງໃນການສ້າງ ແລະ ຮັກສາໃຫ້ຍືນຍົງລະບົບໂຮງຮຽນຂອງຣັດທີ່ເທົ່າທຽມແລະສາມາດເຂົ້າເຖິງໄດ້.

## ມີການປ່ຽນແປງຫຍັງແດ່?

ການປ່ຽນແປງຕໍ່ໄປນີ້ຈະນໍາໄປໃຊ້ກັບການຈົດຊື່ເຂົ້າຮຽນທັງໝົດທີ່ເລີ່ມຕົ້ນໃນເທີມ 1 ປີ 2025.

### ຜູ້ຢູ່ແບບຊົ່ວຄາວ

ນັກຮຽນທຸກຄົນທີ່ມີວີຊ່າແບບຢູ່ຊົ່ວຄາວຈະສາມາດຈົດຊື່ເຂົ້າຮຽນໃນໂຮງຮຽນທ້ອງຖິ່ນຂອງພວກເຂົາໄດ້ໂດຍຂຶ້ນຢູ່ກັບທີ່ຢູ່ອາໄສຂອງພວກເຂົາ.

ຈະມີການຍົກເວັ້ນຄ່າທໍານຽມການຈົດຊື່ເຂົ້າຮຽນສໍາລັບຄອບຄົວທີ່ເປັນຜູ້ຖືວີຊ່າຊົ່ວຄາວດ້ານວິຊາສະເພາະທີ່ຂາດແຄນໃນພາກພື້ນ (ຊັ້ນຍ່ອຍ 482), ເຊັ່ນວ່າ ຜູ້ທີ່ອາໄສຢູ່ນອກເມືອງຊິດນີ ແລະ ໂວລລອງກອງ.

### ອັບເດດເກນສໍາລັບການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນ

ໂຮງຮຽນຂອງຣັດ NSW ມີພື້ນທີ່ການຈົດຊື່ເຂົ້າຮຽນສະເພາະທ້ອງຖິ່ນ. ພື້ນທີ່ຮັບເຂົ້າທີ່ຖືກກໍານົດໂດຍທາງກະຊວງ. ໂຮງຮຽນເຫຼົ່ານີ້ຮັບປະກັນວ່າມີບ່ອນຮຽນພຽງພໍສໍາລັບນັກຮຽນທີ່ອາໄສຢູ່ໃນເຂດການຈົດຊື່ເຂົ້າຮຽນໃນທ້ອງຖິ່ນຂອງພວກເຂົາ. ທ່ານສາມາດສະໝັກເພື່ອຈົດຊື່ລູກຂອງທ່ານເຂົ້າຮຽນຢູ່ນອກເຂດທີ່ທ່ານກໍານົດເປັນ 'ການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນ', ຖ້າມີບ່ອນຫວ່າງ.

ເງື່ອນໄຂທີ່ໄດ້ຮັບການປັບປຸງຈະຈັດລໍາດັບຄວາມສໍາຄັນການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນສໍາລັບອ້າຍເອື້ອຍນ້ອງຂອງນັກຮຽນທີ່ຈົດຊື່ໃນປັດຈຸບັນ, ໂດຍໃຫ້ຄວາມສໍາຄັນກັບອ້າຍເອື້ອຍນ້ອງຂອງນັກຮຽນທີ່ຈົດຊື່ເຂົ້າຮຽນໃນຫ້ອງຮຽນສະໜັບສະໜູນໃນໂຮງຮຽນຫຼັກທີ່ມີສິດໄດ້ຮັບ.

ພາຍໃຕ້ເງື່ອນໄຂທີ່ໄດ້ຮັບການປັບປຸງ ຂະນະນີ້ໂຮງຮຽນອາດຈະພິຈາລະນາການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນສໍາລັບລູກຂອງພະນັກງານໂຮງຮຽນອີກດ້ວຍ.

# ຄຳຖາມທີ່ຖືກຖາມເລື້ອຍໆ

## ການປ່ຽນແປງເຫຼົ່ານີ້ໃຊ້ກັບລູກຂອງຂ້ອຍບໍ?

ການປ່ຽນແປງການຈົດຊື່ເຂົ້າຮຽນໃນໂຮງຮຽນຂອງ ຣັດ NSW ຈະກ່ຽວຂ້ອງກັບທ່ານຖ້າ:

- ລູກຂອງທ່ານຢູ່ໃນວັຍຮຽນ ແລະ ຖືວີຊ່າແບບຢູ່ຊົ່ວຄາວ, ຫຼື
- ລູກຂອງທ່ານຢູ່ໃນວັຍຮຽນ ແລະ ມີອ້າຍເອື້ອຍນ້ອງທີ່ຈົດຊື່ເຂົ້າຮຽນຢູ່ໃນໂຮງຮຽນຂອງ ຣັດ NSW ບ່ອນອື່ນ ແລະທ່ານຕ້ອງການໃຫ້ພວກເຂົາເຂົ້າໂຮງຮຽນດຽວກັນ. ຄວາມສາມາດຂອງໂຮງຮຽນທີ່ຈະຍອມຮັບການຈົດຊື່ເຂົ້າຮຽນຂອງລູກທ່ານແມ່ນຂຶ້ນກັບຄວາມສາມາດ ແລະ ເງື່ອນໄຂການມີສິດຂອງພວກເຂົາ.
- ທ່ານເປັນພະນັກງານຢູ່ໂຮງຮຽນ ຣັດ NSW ຢູ່ນອກເຂດຮັບເຂົ້າຮຽນທີ່ກຳນົດໄວ້ຂອງລູກທ່ານ. ຄວາມສາມາດຂອງໂຮງຮຽນທີ່ຈະຍອມຮັບການຈົດຊື່ເຂົ້າຮຽນຂອງລູກທ່ານແມ່ນຂຶ້ນກັບຄວາມສາມາດ ແລະ ເງື່ອນໄຂການມີສິດຂອງພວກເຂົາ.

## ທຸກໆໂຮງຮຽນຈະຕ້ອງນຳໃຊ້ການປ່ຽນແປງເຫຼົ່ານີ້ບໍ?

ໂຮງຮຽນທັງໝົດຕ້ອງນຳໃຊ້ການປ່ຽນແປງສຳລັບນັກຮຽນທີ່ຖືວີຊ່າທີ່ຢູ່ແບບຊົ່ວຄາວ.

ໂຮງຮຽນສ່ວນໃຫຍ່ ຂຶ້ນກັບຄວາມສາມາດຂອງພວກເຂົາ ຈະຕ້ອງໄດ້ນຳໃຊ້ການປ່ຽນແປງສຳລັບການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນສຳລັບນັກຮຽນທີ່ຈົດຊື່ເຂົ້າຮຽນໃນເທີມທີ 1 ປີ 2025.

ການປ່ຽນແປງນະໂຍບາຍການຈົດຊື່ເຂົ້າຮຽນສຳລັບນັກຮຽນທີ່ຢູ່ແບບຊົ່ວຄາວ ແລະ ນັກຮຽນທີ່ບໍ່ແມ່ນຄົນທ້ອງຖິ່ນຈະບໍ່ສົ່ງຜົນກະທົບຕໍ່ຂໍ້ກຳນົດໃນການມີສິດໄດ້ຮັບສຳລັບການຕັ້ງຄ່າພິເສດ ຫຼືໂຄງການສະເພາະ. ໂຮງຮຽນທີ່ມີເງື່ອນໄຂການມີສິດໄດ້ຮັບລວມທັງໂຮງຮຽນການຄັດເລືອກຢ່າງເຕັມສ່ວນ, ໂຮງຮຽນສຳລັບຈຸດປະສົງສະເພາະ, (Schools for specific purposes (SSPs)), ໂຮງຮຽນການສຶກສາທາງໄກ ແລະ ໂຮງຮຽນທີ່ມີຫ້ອງຮຽນ ຫຼື ໂຄງການທີ່ມີຄວາມຕ້ອງການສະເພາະ (ຕົວຢ່າງ, ຫ້ອງຮຽນໃຫ້ໂອກາດ, ກິລາພິເສດ ແລະ / ຫຼື ສິລະປະພາບ) ຈະສືບຕໍ່ປະຕິບັດຕາມຂະບວນການການຈົດຊື່ເຂົ້າຮຽນໃນປະຈຸບັນຂອງພວກເຂົາ.

ໂຮງຮຽນເພດດຽວຕ້ອງນຳໃຊ້ການປ່ຽນແປງຕາບໃດທີ່ເດັກທີ່ຈົດຊື່ເຂົ້າຮຽນໄດ້ຕາມຂໍ້ກຳນົດການມີສິດໄດ້ຮັບຂອງໂຮງຮຽນສຳລັບເພດນັ້ນ. ຈົ່ງຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງເພື່ອຖາມວ່າການປ່ຽນແປງເຫຼົ່ານີ້ນຳໃຊ້ແນວໃດ.

## ຖ້າລູກຂອງຂ້ອຍເປັນອ້າຍເອື້ອຍນ້ອງຂອງນັກຮຽນທີ່ໄດ້ຈົດຊື່ໃນປັດຈຸບັນ, ໃບສະໝັກຈົດຊື່ເຂົ້າຮຽນຂອງພວກເຂົາໃນເຂດນອກທ້ອງຖິ່ນຈະຖືກຍອມຮັບໂດຍອັດຕະໂນມັດບໍ?

ການປ່ຽນແປງເຫຼົ່ານີ້ບໍ່ໄດ້ຮັບປະກັນວ່າລູກຂອງທ່ານຈະໄດ້ເຂົ້າຮຽນໃນໂຮງຮຽນທີ່ຢູ່ນອກເຂດທ້ອງຖິ່ນດຽວກັນກັບອ້າຍເອື້ອຍນ້ອງຂອງພວກເຂົາ. ໂຮງຮຽນຈະຈັດລຳດັບຄວາມສຳຄັນຂອງການຈົດຊື່ເຂົ້າຮຽນນອກເຂດທ້ອງຖິ່ນສຳລັບອ້າຍເອື້ອຍນ້ອງຂອງນັກຮຽນທີ່ໄດ້ຈົດຊື່ໃນປັດຈຸບັນຖ້າເປັນໄປໄດ້, ແຕ່ການຍອມຮັບໃບສະໝັກຂອງພວກເຂົາອາດຈະຂຶ້ນກັບຄວາມສາມາດຂອງໂຮງຮຽນ. ຈົ່ງຕິດຕໍ່ໂຮງຮຽນທີ່ກ່ຽວຂ້ອງສຳລັບຂໍ້ມູນເພີ່ມເຕີມ.

## ນີ້ໝາຍຄວາມວ່ານັບຈາກນີ້ໄປຈະມີພຽງແຕ່ອ້າຍເອື້ອຍນ້ອງເທົ່ານັ້ນທີ່ຈະໄດ້ຮັບການຍອມຮັບໃຫ້ເປັນການຈົດຊື່ເຂົ້າຮຽນໃນນອກເຂດທ້ອງຖິ່ນ?

ບໍ່, ທ່ານຍັງສາມາດສະໝັກເຂົ້າຮຽນໃນໂຮງຮຽນຂອງຣັດບ່ອນໃດກໍໄດ້ ຖ້າເດັກມີສິດເຂົ້າໂຮງຮຽນ ແລະ ໂຮງຮຽນສາມາດຮອງຮັບເດັກໄດ້. ໃນປັດຈຸບັນໂຮງຮຽນຕ້ອງໄດ້ຈັດລຳດັບຄວາມສຳຄັນແລະພິຈາລະນາໃບສະໝັກໂດຍທຽບກັບເງື່ອນໄຂການຈົດຊື່ເຂົ້າຮຽນໃນນອກເຂດທ້ອງຖິ່ນ (ລວມທັງເງື່ອນໄຂທີ່ກ່ຽວຂ້ອງກັບຄວາມຕ້ອງການຄວາມເປັນຢູ່ທີ່ດີຂອງນັກຮຽນ), ເຊິ່ງໃຫ້ຄວາມສຳຄັນກັບອ້າຍເອື້ອຍນ້ອງຂອງນັກຮຽນທີ່ໄດ້ຈົດຊື່ໃນປະຈຸບັນ ແລະພິຈາລະນາລູກຂອງພະນັກງານຂອງໂຮງຮຽນ.

## ການຈົດຊື່ເຂົ້າຮຽນໃນນອກເຂດທ້ອງຖິ່ນສຳລັບລູກຂອງພະນັກງານໂຮງຮຽນຈະຖືກຍອມຮັບໂດຍອັດຕະໂນມັດບໍ?

ບໍ່. ໂຮງຮຽນຈະຈັດລຳດັບຄວາມສຳຄັນຂອງໃບສະໝັກນອກເຂດທ້ອງຖິ່ນສຳລັບອ້າຍເອື້ອຍນ້ອງຂອງນັກຮຽນທີ່ໄດ້ຈົດຊື່ໃນປັດຈຸບັນ ແລະ ຫຼັງຈາກນັ້ນອາດຈະພິຈາລະນາການຈົດຊື່ເຂົ້າຮຽນໃນນອກເຂດທ້ອງຖິ່ນສຳລັບລູກຂອງພະນັກງານໂຮງຮຽນ. ຖ້າທ່ານເປັນພະນັກງານຂອງໂຮງຮຽນ ການຍອມຮັບລູກຂອງທ່ານອາດຂຶ້ນກັບຄວາມສາມາດຂອງໂຮງຮຽນ. ເງື່ອນໄຂການຈົດຊື່ເຂົ້າຮຽນໃນນອກເຂດທ້ອງຖິ່ນທີ່ປັບປຸງແລ້ວຈະບໍ່ສົ່ງຜົນກະທົບຕໍ່ສິດຂອງລູກຂອງທ່ານໃນການຈົດຊື່ໃນໂຮງຮຽນທ້ອງຖິ່ນຂອງພວກເຂົາ.

# ການຈົດຊື່ເຂົ້າຮຽນຂອງນັກຮຽນດ້ວຍວີຊ່າຜູ້ຢູ່ແບບຊົ່ວຄາວ

**ລູກຂອງຂ້ອຍຖືວີຊ່າຜູ້ຢູ່ແບບຊົ່ວຄາວ. ຂ້ອຍເຄີຍຂໍສະໝັກເຂົ້າຮຽນຢູ່ໂຮງຮຽນທ້ອງຖິ່ນຂອງພວກເຂົາກ່ອນໜ້ານີ້ ແຕ່ໃບສະໝັກຖືກປະຕິເສດ. ຂ້ອຍສາມາດຍື່ນໃບສະໝັກເຂົ້າຮຽນຂອງລູກຂ້ອຍໄດ້ອີກບໍ?**

ທ່ານສາມາດສົ່ງໃບສະໝັກເຂົ້າຮຽນໃໝ່ໄດ້ ຖ້າລູກຂອງທ່ານຖືວີຊ່າແບບຢູ່ຊົ່ວຄາວ ແລະ ໃບສະໝັກກ່ອນໜ້ານີ້ໄປໂຮງຮຽນທ້ອງຖິ່ນຂອງທ່ານຖືກປະຕິເສດ. ກະລຸນາປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນພາກລຸ່ມນີ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈົດຊື່ເຂົ້າຮຽນຂອງລູກຂ້ອຍສຳລັບປີ 2025 ໄດ້ແນວໃດ?"

**ລູກຂອງຂ້ອຍຖືວີຊ່າແບບຢູ່ຊົ່ວຄາວ ແລະ ຂ້ອຍໄດ້ຈົດຊື່ລູກຂອງຂ້ອຍເຂົ້າໂຮງຮຽນແລ້ວໃນປີ 2025. ຂ້ອຍສາມາດປ່ຽນບ່ອນທີ່ຂ້ອຍໄດ້ຈົດຊື່ລູກຂອງຂ້ອຍໄດ້ບໍ?**

ຖ້າລູກຂອງທ່ານຖືວີຊ່າແບບຢູ່ຊົ່ວຄາວແລະໄດ້ຈົດຊື່ຢູ່ໃນໂຮງຮຽນສຳລັບປີ 2025 ແລ້ວ ທ່ານສາມາດສະໝັກຂໍເອົາການປ່ຽນແປງບ່ອນທີ່ພວກເຂົາຈົດຊື່ເຂົ້າຮຽນໃນປັດຈຸບັນໄດ້. ກະລຸນາປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນພາກລຸ່ມນີ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈົດຊື່ເຂົ້າຮຽນຂອງລູກຂ້ອຍສຳລັບປີ 2025 ໄດ້ແນວໃດ?"

**ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈົດຊື່ເຂົ້າຮຽນລູກຂອງຂ້ອຍສຳລັບປີ 2025 ໄດ້ແນວໃດ?**

ພໍ່ແມ່ ຫຼື ຜູ້ດູແລນັກຮຽນທີ່ຖືວີຊ່າແບບຢູ່ຊົ່ວຄາວຕ້ອງປະຕິບັດຕາມຂັ້ນຕອນເຫຼົ່ານີ້ເພື່ອປ່ຽນການຈົດຊື່ເຂົ້າໂຮງຮຽນທ້ອງຖິ່ນຂອງພວກເຂົາ:

1. ຕິດຕໍ່ທີມງານໂຄງການຜູ້ຢູ່ແບບຊົ່ວຄາວທາງໂທລະສັບ ຕາມເບີ 1300 300 229 (ທາງເລືອກ 1) ຫຼື ທາງອີເມລ໌ທີ່ tempvisa@det.nsw.edu.au ເພື່ອຮ້ອງຂໍການປ່ຽນໂຮງຮຽນສຳລັບລູກຂອງທ່ານ. ທ່ານຈະໄດ້ຮັບການແຈ້ງຈາກທີມງານໂຄງການຜູ້ຢູ່ແບບຊົ່ວຄາວເມື່ອການໂອນຍ້າຍໂຮງຮຽນສຳລັບລູກຂອງທ່ານສຳເລັດແລ້ວ.
2. ຕິດຕໍ່ໂຮງຮຽນທ້ອງຖິ່ນຂອງທ່ານເພື່ອຈົດຊື່ເຂົ້າຮຽນລູກຂອງທ່ານ. ໂຮງຮຽນຈະໃຫ້ແບບຟອມສະໝັກເປັນເຈ້ຍທີ່ທ່ານຕ້ອງຂຽນຕື່ມເພື່ອຈົດຊື່ເຂົ້າຮຽນ. ຊອກຫາລາຍລະອຽດການຕິດຕໍ່ໂຮງຮຽນທ້ອງຖິ່ນຂອງທ່ານໄດ້ທີ່ education.nsw.gov.au/find-a-public-school

**ລູກຂອງຂ້ອຍເປັນຜູ້ຢູ່ແບບຊົ່ວຄາວດ້ວຍວີຊ່າອື່ນທີ່ບໍ່ແມ່ນວີຊ່າ 482. ຂ້ອຍຕ້ອງຈ່າຍຄ່າທຳນຽມການຈົດຊື່ເຂົ້າຮຽນບໍ?**

ໂດຍທົ່ວໄປແລ້ວຄ່າທຳນຽມການສະໝັກຂອງຜູ້ຢູ່ແບບຊົ່ວຄາວ ແລະ ຄ່າຮຽນໃນການຈົດຊື່ເຂົ້າຮຽນໃນໂຮງຮຽນຂອງລັດຖະບານແມ່ນຄິດໄລ່ໂດຍໃຊ້ຊັ້ນຍ່ອຍຂອງວີຊ່າທີ່ນັກຮຽນຖື. ສຳລັບຂໍ້ມູນລາຍລະອຽດກ່ຽວກັບຄ່າທຳນຽມທີ່ນຳໃຊ້ກັບປະເພດວີຊ່າຂອງທ່ານ ກະລຸນາເຂົ້າໄປທີ່ເວັບໄຊທ໌ DE International: deinternational.nsw.edu.au/study-options/study-programs/temporary-residents. ຖ້າທ່ານຍັງບໍ່ແນ່ໃຈວ່າມີການຍົກເວັ້ນຄ່າທຳນຽມຫຼືບໍ່, ທ່ານສາມາດຕິດຕໍ່ທີມງານໂຄງການຜູ້ຢູ່ແບບຊົ່ວຄາວໄດ້ທີ່ tempvisa@det.nsw.edu.au

# ການຈັດຊື່ເຂົ້າຮຽນຂອງອ້າຍເອື້ອຍນ້ອງທີ່ຢູ່ນອກເຂດທ້ອງຖິ່ນ

**ຂ້ອຍໄດ້ສະໝັກເພື່ອຈັດຊື່ລູກຂອງຂ້ອຍໃນໂຮງຮຽນທີ່ອ້າຍເອື້ອຍນ້ອງຂອງພວກເຂົາເຂົ້າຮຽນ ແຕ່ໃບສະໝັກຂອງພວກເຂົາຖືກປະຕິເສດ. ຂ້ອຍສາມາດຍື່ນໃບສະໝັກຈັດຊື່ເຂົ້າຮຽນຂອງລູກຂ້ອຍໄດ້ອີກບໍ?**

ຖ້າທ່ານໄດ້ສະໝັກຈັດຊື່ເຂົ້າຮຽນໃຫ້ລູກຂອງທ່ານຢູ່ໃນໂຮງຮຽນນອກເຂດທ້ອງຖິ່ນຂອງອ້າຍເອື້ອຍນ້ອງຂອງພວກເຂົາ ແລະ ໃບສະໝັກໄດ້ຖືກປະຕິເສດ ກະລຸນາເຮັດຕາມຂັ້ນຕອນທີ່ລະບຸໄວ້ໃນພາກສ່ວນນີ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈັດຊື່ເຂົ້າຮຽນຂອງລູກຂ້ອຍສໍາລັບປີ 2025 ໄດ້ແນວໃດ?" ເພື່ອສົ່ງໄປອີກເທື່ອນຶ່ງ.

**ຂ້ອຍໄດ້ຈັດຊື່ເຂົ້າຮຽນລູກຂອງຂ້ອຍຢູ່ໃນໂຮງຮຽນສໍາລັບປີ 2025 ແຕ່ອ້າຍເອື້ອຍນ້ອງຂອງພວກເຂົາໄດ້ຢູ່ໃນໂຮງຮຽນນອກເຂດທ້ອງຖິ່ນທີ່ແຕກຕ່າງກັນ. ຂ້ອຍສາມາດສະໝັກເພື່ອປ່ຽນບ່ອນທີ່ພວກເຂົາຈັດຊື່ເຂົ້າຮຽນໄດ້ບໍ?**

ຖ້າທ່ານຕ້ອງການປ່ຽນໂຮງຮຽນທີ່ລູກຂອງທ່ານໄດ້ຈັດຊື່ເຂົ້າຮຽນໃນປີ 2025 ເປັນໂຮງຮຽນທີ່ຢູ່ນອກເຂດທ້ອງຖິ່ນດຽວກັນກັບທີ່ອ້າຍເອື້ອຍນ້ອງຂອງພວກເຂົາກໍາລັງຮຽນຢູ່ ກະລຸນາເຮັດຕາມຂັ້ນຕອນທີ່ລະບຸໄວ້ໃນພາກສ່ວນນີ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈັດຊື່ເຂົ້າຮຽນຂອງລູກຂ້ອຍສໍາລັບປີ 2025 ໄດ້ແນວໃດ?"

**ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈັດຊື່ເຂົ້າຮຽນຂອງລູກຂ້ອຍສໍາລັບປີ 2025 ໄດ້ແນວໃດ?**

ພໍ່ແມ່ ຫຼື ຜູ້ດູແລທີ່ຕ້ອງການຈັດຊື່ລູກຂອງພວກເຂົາຢູ່ໃນໂຮງຮຽນທີ່ຢູ່ນອກເຂດທ້ອງຖິ່ນດຽວກັນກັບອ້າຍເອື້ອຍນ້ອງຂອງພວກເຂົາຕ້ອງປະຕິບັດຕາມຂັ້ນຕອນເຫຼົ່ານີ້ເພື່ອປ່ຽນການຈັດຊື່ເຂົ້າຮຽນຂອງພວກເຂົາ:

## ໃບສະໝັກຈັດຊື່ເຂົ້າຮຽນທາງອອນໄລນ໌

1. ໄປທີ່ເວັບໄຊທ໌ຂອງໂຮງຮຽນທີ່ທ່ານຕ້ອງການທີ່ຈະສະໝັກເຂົ້າ ຫຼັງຈາກນັ້ນໃຫ້ຄລິກໃສ່ການຈັດຊື່ໃນທາງເລືອກໃນເມນູ.
2. ໃນໜ້າເວັບການຈັດຊື່, ພາຍໃຕ້ຫົວຂໍ້ວິທີການຈັດຊື່, ໃຫ້ຄລິກລິ້ງກ໌ໄປຫາໃບສະໝັກການຈັດຊື່ເຂົ້າຮຽນອອນໄລນ໌.
3. ເມື່ອທ່ານໄດ້ສົ່ງໃບສະໝັກເຂົ້າຮຽນແລ້ວ ໂຮງຮຽນອາດຈະມີຂໍ້ສະເໜີທີ່ທ່ານຈະຕ້ອງຍອມຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານໄດ້ຖືກຍອມຮັບ ໃຫ້ຕິດຕໍ່ໂຮງຮຽນທີ່ລູກຂອງທ່ານເຄີຍຈັດຊື່ເຂົ້າຮຽນໄວ້ກ່ອນນີ້ສໍາລັບປີ 2025 ເພື່ອຖອນການຈັດຊື່ເຂົ້າຮຽນນັ້ນ.

## ໃບສະໝັກແບບຟອມເຈ້ຍ

1. ຕິດຕໍ່ໂຮງຮຽນຂອງອ້າຍເອື້ອຍນ້ອງຂອງລູກທ່ານເພື່ອຊອກຮູ້ວ່າພວກເຂົາສາມາດຮອງຮັບລູກຂອງທ່ານຫຼືບໍ່.
2. ຖ້າໂຮງຮຽນສາມາດຮອງຮັບລູກຂອງທ່ານໄດ້ ໃຫ້ຕື່ມແບບຟອມໃບສະໝັກເປັນເຈ້ຍໃໝ່ ເຊິ່ງທາງໂຮງຮຽນສາມາດຈັດຫາໄວ້ໃຫ້.
3. ເມື່ອທ່ານໄດ້ສົ່ງແບບຟອມສະໝັກເຂົ້າຮຽນແລ້ວ ໂຮງຮຽນອາດຈະມີຂໍ້ສະເໜີໃຫ້ທ່ານຊຶ່ງທ່ານຈະຕ້ອງຍອມຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານຖືກຍອມຮັບ ໃຫ້ຕິດຕໍ່ໂຮງຮຽນທີ່ລູກຂອງທ່ານເຄີຍໄດ້ຈັດຊື່ເຂົ້າຮຽນສໍາລັບປີ 2025 ເພື່ອຖອນການຈັດຊື່ນັ້ນ.

**ຂ້ອຍໄດ້ຍື່ນຄໍາສະເໜີຄວາມສົນໃຈ (Expression of Interest (EOI)) ສໍາລັບການປ່ຽນຜ່ານຊັ້ນປີ 6 ຫາ ປີ 7 ໃນປີ 2025. ຂ້ອຍສາມາດປ່ຽນບ່ອນທີ່ຂ້ອຍໄດ້ຈັດຊື່ເຂົ້າຮຽນຂອງລູກຂ້ອຍໄດ້ບໍ?**

EOI ສໍາລັບການປ່ຽນຜ່ານຊັ້ນປີ 6 ຫາ ປີ 7 ໄດ້ປິດລົງແລ້ວ ດັ່ງນັ້ນພໍ່ແມ່ແລະຜູ້ດູແລບໍ່ສາມາດປ່ຽນແປງບັນຊີລາຍຊື່ໂຮງຮຽນທີ່ຕ້ອງການສໍາລັບປີ 2025 ໄດ້ອີກຕໍ່ໄປ.

ຖ້າທ່ານຕ້ອງການປ່ຽນໂຮງຮຽນທີ່ທ່ານໄດ້ຈັດຊື່ລູກຂອງທ່ານໃນປີ 2025 ເປັນໂຮງຮຽນຢູ່ນອກເຂດທ້ອງຖິ່ນດຽວກັນທີ່ອ້າຍເອື້ອຍນ້ອງຂອງພວກເຂົາເຂົ້າຮຽນ ທ່ານຄວນປະຕິບັດຕາມຂັ້ນຕອນຕໍ່ໄປນີ້:

## ໃບສະໝັກເຂົ້າຮຽນອອນໄລນ໌

1. ໄປທີ່ເວັບໄຊທ໌ຂອງໂຮງຮຽນທີ່ທ່ານຕ້ອງການທີ່ຈະສະໝັກເຂົ້າ ຫຼັງຈາກນັ້ນໃຫ້ຄລິກໃສ່ການຈັດຊື່ໃນທາງເລືອກໃນເມນູ.
2. ໃນໜ້າເວັບການຈັດຊື່ເຂົ້າຮຽນ ພາຍໃຕ້ຫົວຂໍ້ວິທີການຈັດຊື່ ໃຫ້ຄລິກລິ້ງກ໌ໄປຫາໃບສະໝັກການຈັດຊື່ເຂົ້າຮຽນອອນໄລນ໌.
3. ເມື່ອທ່ານໄດ້ສົ່ງແບບຟອມສະໝັກເຂົ້າຮຽນແລ້ວ ໂຮງຮຽນອາດຈະມີຂໍ້ສະເໜີໃຫ້ທ່ານຊຶ່ງທ່ານຈະຕ້ອງຍອມຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານຖືກຍອມຮັບ ໃຫ້ຕິດຕໍ່ໂຮງຮຽນທີ່ລູກຂອງທ່ານເຄີຍໄດ້ຈັດຊື່ເຂົ້າຮຽນສໍາລັບປີ 2025 ເພື່ອຖອນການຈັດຊື່ນັ້ນ.

## ໃບສະໝັກແບບຟອມເຈ້ຍ

1. ຕິດຕໍ່ໂຮງຮຽນຂອງອ້າຍເອື້ອຍນ້ອງຂອງລູກທ່ານເພື່ອຊອກຮູ້ວ່າພວກເຂົາສາມາດຮອງຮັບລູກຂອງທ່ານຫຼືບໍ່. ຊອກຫາການຕິດຕໍ່ໂຮງຮຽນໄດ້ທີ່: [education.nsw.gov.au/find-a-public-school](education.nsw.gov.au/find-a-public-school).
2. ຖ້າໂຮງຮຽນສາມາດຮອງຮັບລູກຂອງທ່ານໄດ້ ໃຫ້ຕື່ມແບບຟອມໃບສະໝັກເປັນເຈ້ຍໃໝ່ ເຊິ່ງທາງໂຮງຮຽນສາມາດຈັດຫາໄວ້ໃຫ້.
3. ເມື່ອທ່ານໄດ້ສົ່ງແບບຟອມສະໝັກເຂົ້າຮຽນແລ້ວ ໂຮງຮຽນອາດຈະມີຂໍ້ສະເໜີໃຫ້ທ່ານຊຶ່ງທ່ານຈະຕ້ອງຍອມຮັບພາຍໃນ 14 ມື້.
4. ຖ້າໃບສະໝັກຂອງທ່ານໄດ້ຮັບການຍອມຮັບ ແລະ ທ່ານໄດ້ຍອມຮັບຂໍ້ສະເໜີ EOI ຂອງທ່ານແລ້ວ ກະລຸນາຕິດຕໍ່ໂຮງຮຽນໂດຍກົງເພື່ອຖອນການການຈັດຊື່.

# ການຈັດຊື່ເຂົ້າຮຽນເດັກນອກເຂດທ້ອງຖິ່ນຂອງພະນັກງານໂຮງຮຽນ

**ຂ້ອຍໄດ້ສະໝັກເຂົ້າຮຽນໃຫ້ລູກຂອງຂ້ອຍໃນໂຮງຮຽນທີ່ຂ້ອຍເຮັດວຽກຢູ່ ແຕ່ໃບສະໝັກຂອງພວກເຂົາຖືກປະຕິເສດ. ຂ້ອຍສາມາດຍື່ນໃບສະໝັກເຂົ້າຮຽນຂອງລູກຂ້ອຍໄດ້ອີກບໍ?**

ຖ້າທ່ານໄດ້ສະໝັກເພື່ອຈັດຊື່ເຂົ້າຮຽນລູກຂອງທ່ານຢູ່ໂຮງຮຽນທີ່ທ່ານເຮັດວຽກຢູ່ ແລະ ໃບສະໝັກຖືກປະຕິເສດ ທ່ານສາມາດສົ່ງໃໝ່ໄດ້. ເພື່ອເຮັດແນວນັ້ນ ກະລຸນາປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນຂ້າງເທິງພາຍໃຕ້ຫົວຂໍ້ "ຂ້ອຍຈະປ່ຽນບ່ອນທີ່ຂ້ອຍໄດ້ຈັດຊື່ເຂົ້າຮຽນລູກຂອງຂ້ອຍສໍາລັບປີ 2025 ໄດ້ແນວໃດ?".

## ຂ້ອຍຈະຊອກຫາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

**ສໍາລັບການສອບຖາມການຈັດຊື່ເຂົ້າຮຽນຈົ່ງໂອ້ລົມກັບໂຮງຮຽນທີ່ທ່ານຕ້ອງການ. ຊອກຫາລາຍລະອຽດການຕິດຕໍ່ຂອງໂຮງຮຽນຂອງທ່ານໄດ້ທີ່:** [education.nsw.gov.au/find-a-public-school](education.nsw.gov.au/find-a-public-school)

**ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການຈັດຊື່ເຂົ້າຮຽນໃນໂຮງຮຽນລັດຖະບານ NSW:** [education.nsw.gov.au/enrolment](education.nsw.gov.au/enrolment)

**ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການຈັດຊື່ເຂົ້າຮຽນໃນໂຮງຮຽນຂອງລັດຖະບານ NSW ໃນຖານະເປັນຜູ້ຢູ່ແບບຊົ່ວຄາວ:** [https://www.deinternational.nsw.edu.au/](https://www.deinternational.nsw.edu.au/)

**ສໍາລັບການສອບຖາມຂໍ້ມູນທົ່ວໄປຂອງການຈັດຊື່ເຂົ້າຮຽນ ຈົ່ງຕິດຕໍ່ຫ້ອງການໃຫຍ່ຂອງກະຊວງສຶກສາ ຕາມເບີ: 1300 679 332**

**ບໍລິການ ນາຍພາສາ ທາງໂທລະສັບ**

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ໂຮງຮຽນ ຫຼື ທາງກະຊວງສຶກສາ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ທີ່ເບີ 13 14 50 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການໂທຫາແລະຜູ້ຮັບສາຍກໍຈະຊອກເອົານາຍພາສາມາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກຄິດຄ່າບໍລິການນີ້.